# ມິຊຊາອາທິດທີ 2 ກຳນົດພຣະກຣິສຕະຄົມ ປີ C
# ວັນອາທິດທີ 9 ທັນວາ 2018



**ພຣະວໍລະສານໂດຍນັກບຸນລູກາ 3, 1-6**

ປີທີສິບຫ້າແຫ່ງລາຊາການຂອງກະສັດຕີເບຣີໂອເຊຊາເຣ, ປອນຊີໂອປີລາໂຕເປັນຜູ້ຄອງແຂວງຢູເດ, ເຮໂຣດເປັນເຈົ້າເມືອງກາລີເລ, ຟີລິບເປນ້ອງຊາຍເປັນເຈົ້າເມືອງອີຕູເຣແລະຕຣາໂກນິດ. ສ່ວນລີຊານີອາເປັນເຈົ້າເມືອງອາບີແລນ, ອັນນາແລະກາອີຟາເປັນເຈົ້າຄະນະສົງ. ໃນປີນັ້ນເອງພຣະເຈົ້າໄດ້ກ່າວກັບຢວງບຸດຂອງຊາກາຣີອາຢູ່ທີ່ປ່ງວ.

ຢວງຈຶ່ງໄປທົ່ວເຂດແຂວງທີ່ຢູ່ຮິມຝັ່ງແມ່ນໍ້າຢໍຣແດນ ເທດສະໜາເລື່ອງພິທີລ້າງຍົກບາບໃຫ້ພວກທີ່ຍອມເປັນທຸກກັບໃຈ. ຕາມຖ້ອຍຄຳທີ່ໄດ້ຂຽນໄວ້ໃນໜັງສືຂອງປະພາສົກອີຊາຢາວ່າດັ່ງນີ້: ມີສຽງຮ້ອງເຕືອນໃນທີ່ປ່ງວວ່າ ຈົ່ງຈັດຕຽມເສັ້ນທາງຂອງພຣະເຈົ້າໃຫ້ຮາບພຽງ. ບ່ອນຫລຸບບ່ອນຕ່ຳຈະຖົມໃຫ້ເຕັມ. ພູເຂົາແລະເນີນຈະຕັດລົງໃຫ້ພຽງ, ທາງຄົດລ້ຽວຈະຕັດໃຫ້ຊື່, ທາງເປັນຄື້ນຈະກວາດໃຫ້ລ່ຽນ. ແລ້ວທຸກຄົນຈະໄດ້ພົບເຫັນຄວາມຣອດຂອງພຣະເຈົ້າ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 3, 1-6**

ອາທິດນີ້ເປັນອາທິດທີສອງຂອງກຳນົດຕຽມຮັບການບັງເກີດມາຂອງພຣະບຸດພຣະເຈົ້າ, ພຣະຜູ້ກູ້ໄຖ່ຂອງພວກເຮົາ. ໃນບັນຍາກາດແຫ່ງການຕຽມງານສະຫລອງບຸນໂນແອນຢ່າງຄຶກຄື້ນແລະມ່ວນຊື່ນນີ້, ວາຈາຂອງພຣະເຈົ້າໃນວັນນີ້ພັດເຊີນຊວນພວກເຮົາໃຫ້ເຂົ້າໄປໃນທີ່ປ່ຽວພ້ອມກັບນັກບຸນຍວງບັບຕິສຕາ ເພື່ອຟັງສຽງຂອງພຣະອົງ, ເພື່ອເບິ່ງຄືນເສັ້ນທາງຊີວິດຂອງພວກເຮົາ. ແນ່ນອນແຕ່ລະຄົນກໍມີວິຖີຊີວິດ, ບັນຫາ, ຄວາມຍາກຄວາມງ່າຍທີ່ແຕກຕ່າງກັນ ແລະຄວາມແຕກຕ່າງນີ້ອາດຈະເປັນກຳແພງ, ເປັນໂນນ, ຫລືເປັນຂຸມສຳລັບພວກເຮົາໃນການຫຍັບເຂົ້າຫາພຣະເຈົ້າແລະເພື່ອນພີ່ນ້ອງຂອງພວກເຮົາ. ແລະຍິ່ງໄປກວ່ານັ້ນສິ່ງທີ່ບໍ່ພຽງຮາບດັ່ງກ່າວນັ້ນອາດຈະເປັນອຸປະສັກກີດຂວາງບໍ່ໃຫ້ພຣະເຈົ້າລົງມາບັງເກີດໃນຈິດໃຈຂອງພວກເຮົາ.

ວັນນີ້ວາຈາຂອງພຣະເຈົ້າຜ່ານທາງສຽງຮ້ອງເຕືອນໃນທີ່ປ່ຽວຂອງນັກບຸນຍວງບັບຕິສຕາບອກສອນພວກເຮົາໃຫ້ແກ້ແປງບ່ອນທີ່ເປັນໂນນໃຫ້ພຽງຮາບແລະຖົມບ່ອນທີ່ຍັງຫລຸບຍັງຕ່ຳໃຫ້ເຕັມ. ໝາຍຄວາມວ່າແນວໃດ? ໝາຍວ່າຖ້າຊີວິດຂອງພວກເຮົາມີຄວາມເອນອຽງໄປທາງຄວາມສຸກຝ່າຍໂລກຫລາຍ ໃຫ້ພວກເຮົາຫລົດນ້ອຍຖອຍລົງມາ. ຖ້າພວກເຮົາຍັງບໍ່ທັນມີຊີວິດສະໜິດສຳພັນກັບວາຈາແລະຄຳສອນຂອງພຣະເຈົ້າ ໃຫ້ພວກເຮົາຫັນມາຫາພຣະອົງເພື່ອຕື່ມເຕັມຊີວິດຄວາມເຊື່ອຂອງພວກເຮົາ. ຖ້າພວກເຮົາຍັງຈົມຢູ່ໃນຫລຸມແຫ່ງຄວາມໂສກເສົ້າແລະສິ້ນຫວັງ ໃຫ້ພວກເຮົາຕື່ມຖົມດ້ວຍຄວາມຫວັງແລະຄວາມຍິນດີ ຍ້ອນພຣະຜູ້ກູ້ໄຖ່ຂອງພວກເຮົາໃກ້ຈະສະເດັດມາແລ້ວ. ຖ້າພວກເຮົາຍັງມີຄວາມຄຽດແຄ້ນແລະເຫັນແກ່ຕົວ ໃຫ້ພວກເຮົາເປີດໃຈແລະໃຫ້ອະໄພ ເພື່ອໂນນ, ຂຸມໃນຊີວິດຂອງພວກເຮົາຈະໄດ້ຮາບພຽງແລະຊີວິດຂອງພວກເຮົາຈະໄດ້ຢູ່ໃນສັນຕິສຸກຂອງພຣະເຈົ້າ.

ເປັນຫຍັງພວກເຮົາຈຶ່ງຕ້ອງແກ້ແປງເສັ້ນທາງຊີວິດແລະການກະທຳຂອງພວກເຮົາ? ຄຳຕອບກໍຄືເພື່ອທຸກຄົນຈະໄດ້ພົບເຫັນຄວາມຣອດຂອງພຣະເຈົ້າ. ໝາຍວ່າພຣະເຢຊູເຈົ້າມາໃນໂລກນີ້ ພຣະອົງບໍ່ໄດ້ມາເພື່ອຕັດສິນລົງໂທດຄົນບໍ່ດີ ແຕ່ພຣະອົງມາເພື່ອໃຫ້ທຸກຄົນໄດ້ຮັບຄວາມຣອດ ບໍ່ວ່າຈະເປັນຄົນດີຫລືຄົນບໍ່ດີ, ຄົນທີ່ຮູ້ຈັກພຣະອົງ ຫລືບໍ່ຮູ້ຈັກພຣະອົງກໍຕາມ. ທຸກຄົນມີສິດໄດ້ຮັບການໄຖ່ກູ້ ຖ້າພວກເຂົາຮູ້ຈັກດັດແປງແກ້ໄຂຊີວິດຂອງຕົນ.

ນີ້ແລແມ່ນຂ່າວດີສຳລັບພວກເຮົາທີ່ກຳລັງຕຽມການບັງເກີດມາຂອງອົງພຣະເຢຊູ ພຣະຜູ້ກູ້ໄຖ່ຂອງພວກເຮົາ. ນີ້ແລແມ່ນບໍ່ເກີດແຫ່ງຄວາມຍິນດີຂອງພວກເຮົາ ຍ້ອນພວກເຮົາໄດ້ຕຽມພ້ອມຈິດໃຈເພື່ອໃຫ້ພຣະອົງລົງມາເກີດໃນຕົວຂອງພວກເຮົາ. ນີ້ແລແມ່ນສັນຕິສຸກແລະຄວາມຊອບທຳຂອງພວກເຮົາ ຍ້ອນທຸກຄົນໄດ້ພົບແລະເຫັນຄວາມຣອດທີ່ມາຈາກພຣະເຢຊູກຸມານພຣະບຸດຂອງພຣະເຈົ້າທີ່ລົງມາຮັບເນື້ອກາຍເປັນມະນຸດເໝືອນກັບພວກເຮົາ ເພື່ອຢູ່ທ່າມກາງພວກເຮົາ. ຍ້ອນພຣະອົງແມ່ນ « ແອມມານູແອນ » ພຣະເຈົ້າຢູ່ກັບພວກເຮົາ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ